ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງຜົ້ງສາລີ

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ 131/ພຊສ

ວັນທີ ... 1.3. NOV. 2013

# ໃບຢັ້ງຢືນ

## ຮັບຮອງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນຂອງໂຄງການກໍ່ສ້າງເສັ້ນທາງ ແຕ່ບ້ານ ກໍແມນ-ບ້ານ ຕັ້ງແຊກ, ເມືອງຜົ້ງສາລີ, ແຂວງຜົ້ງສາລີ.

- ອີງຕາມດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຢູ່ ສ ປປ ລາວ, ສະບັບເລກ ທີ 112/ນຍ, ລົງວັນທີ 16/02/2010.
- ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມສະບັບເລກທີ 29/ສພຊ, ວັນທີ 18/12/2012
- ອີງໃສ່ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມສະບັບເລກທີ 1467/ກຊສ, ລົງວັນທີ 9/3/2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງ.
- ອີງໃສ່ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນຂອງໂຄງການກໍ່ສ້າງເສັ້ນທາງ ແຕ່ບ້ານ ກໍແມນ-ບ້ານ ຕັ້ງແຊກ, ເມືອງຜົ້ງສາລີ, ແຂວງຜົ້ງສາລີ.

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຜົ້ງສາລີໄດ້ອອກໃບຢັ້ງຢືນຮັບຮອງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນຂອງໂຄງການກໍ່ສ້າງເສັ້ນທາງແຕ່ບ້ານກໍແມນ-ບ້ານຕັ້ງແຊກ, ເມືອງຜົ້ງສາລີ ໃຫ້ແກ່ພະແນກກະສິກຳ-ປ່າໄມ້ແຂວງ (ໜ່ວຍງານ ພຊຄ ຂັ້ນແຂວງ) ໂດຍອີງໃສ່ບົດປະເມີນຜົນກະທົບຕໍ່ສິ່ງແວດ ແວດລ້ອມເບື້ອງຕົ້ນ ແລະ ຈາກການກວດກາເນື້ອໃນບົດລາຍງານພາກສະໜາມຂອງໂຄງການກໍ່ສ້າງເສັ້ນທາງດັ່ງກ່າວແມ່ນຖືກຕ້ອງຕາມລະບຽບກົດໝາຍ.

ດັ່ງນັ້ນ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຜົ້ງສາລີ, ຈຶ່ງອອກໃບຢັ້ງຢືນດ້ານສິ່ງແວດລ້ອມສະບັບນີ້ໄວ້ ເພື່ອເປັນຫຼັກຖານໃນການຈັດຕັ້ງປະຕິບັດຂັ້ນຕໍ່ໄປ.

ຫົວໜ້າພະແນກ

ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ພະແນກ ຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ແຂວງຜົ້ງສາລີ

ຄຳອິນ ສີແກ້ວ

- <u>ໝາຍເຫດ:</u>

1/. ໃບຢັ້ງຢືນສະບັບນີ້ຫ້າມບໍ່ໃຫ້ຜູ້ອື່ນນຳໄປໃຊ້, ຫ້າມປອມແປງຢ່າງເດັດຂາດ ແລະ ໃບຢັ້ງຢືນສະບັບນີ້ສາມາດນຳໃຊ້ໄດ້ສອງປີ

2/. ຜູ້ລະເມີດຕ້ອງໄດ້ຮັບໂທດຕາມລະບຽບກົດໝາຍຂອງ ສ ປປ ລາວ.

FROM :NRIPSL FAX NO. :088210275 28 Apr. 2014 10:22